ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງການເງິນ
ກົມພາສີ

ເລກທີ 05666/ກພສ
ນະຄອນຫຼວງວຽງຈັນ, ວັນທີ 27 SEP 2018

# ແຈ້ງການ

ເຖິງ : ບັນດາພະແນກອ້ອມຂ້າງກົມພາສີ, ກອງຄຸ້ມຄອງພາສີ, ກອງກວດກາພາສີປະຈຳແຂວງ ແລະ ດ່ານພາສີຊາຍແດນ ໃນຂອບເຂດທົ່ວປະເທດ.

ເລື່ອງ : ການຈັດຕັ້ງປະຕິບັດເກັບຄ່າທຳນຽມພາຫະນະຜ່ານແດນ ແລະ ພາຫະນະເຂົ້າ-ອອກ ສປປ ລາວ ຕາມລັດຖະບັນຍັດຂອງປະທານປະເທດ ສະບັບເລກທີ 003/ປປທ, ລົງວັນທີ 26 ທັນວາ 2012.

- ອີງຕາມ ກົດໝາຍວ່າດ້ວຍພາສີ ສະບັບເລກທີ 04/ສພຊ, ລົງວັນທີ 20 ທັນວາ 2011 ແລະ ສະບັບປັບປຸງ ບາງມາດຕາ ສະບັບເລກທີ 57/ສພຊ, ລົງວັນທີ 24 ທັນວາ 2014;
- ອີງຕາມ ລັດຖະບັນຍັດຂອງປະທານປະເທດ ເລກທີ 003/ປປທ, ລົງວັນທີ 26 ທັນວາ 2012 ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ.
- ອີງຕາມ ບົດແນະນຳຂອງກະຊວງການເງິນ ສະບັບເລກທີ 1225/ກງ, ລົງວັນທີ 23 ເມສາ 2015.
- ອີງຕາມ ບົດລາຍງານຂອງພະແນກຈັດຕັ້ງ, ບໍລິຫານ ແລະ ການເງິນ ສະບັບເລກທີ 00718/ຈບງ, ລົງວັນທີ 07 ກັນຍາ 2018.

ເພື່ອຮັບປະກັນໃນການຈັດຕັ້ງປະຕິບັດ ກ່ຽວກັບການການຈັດເກັບຄ່າທຳນຽມພາຫະນະຜ່ານແດນ ແລະ ພາຫະນະເຂົ້າ-ອອກ ສປປ ລາວ ຕາມລັດຖະບັນຍັດຂອງປະທານປະເທດ ສະບັບເລກທີ 003/ປປທ, ລົງວັນທີ 26 ທັນວາ 2012 ໃຫ້ຖືກຕ້ອງສອດຄ່ອງກັບບົດແນະນຳຂອງກະຊວງການເງິນ ສະບັບເລກທີ 1225/ກງ, ລົງວັນທີ 23 ເມສາ 2015 ແລະ ມີຄວາມເປັນເອກະພາບ ໃນຂອບເຂດທົ່ວປະເທດ.

## ຫົວໜ້າກົມພາສີ ອອກແຈ້ງການແນະນຳ ດັ່ງນີ້:

1. ການຈັດຕັ້ງປະຕິບັດຕາມລັດຖະບັນຍັດຂອງປະທານປະເທດ ສະບັບເລກທີ 003/ປປທ, ລົງວັນທີ 26 ທັນວາ 2012 (ສະບັບປັບປຸງ) ກ່ຽວເກັບຄ່າທຳນຽມປະເພດພາຫະນະ ແມ່ນໄດ້ແຍກການຈັດເກັບເປັນ 02 ປະເພດຄື: ລົດຜ່ານແດນ ແລະ ລົດເຂົ້າ-ອອກ ສປປ ລາວ ດັ່ງລາຍລະອຽດລຸ່ມນີ້:

❖ <u>ລົດຜ່ານແດນ ສປປ ລາວ ປະເພດຕ່າງໆ ຈັດເກັບຕາມມາດຕາ 21 ຂໍ້ V, 5.1</u>

| ລ/ດ | ປະເພດພາຫະນະ | ກີບ/ຄັ້ງ |
|---|---|---|
| 1 | ລົດເກງ, ຈິບ, ກະບະ | 25.000 |
| 2 | ລົດໂດຍສານຂະໜາດນ້ອຍ 7 ບ່ອນນັ່ງລົງມາ | 50.000 |
| 3 | ລົດໂດຍສານຂະໜາດກາງ 8-25 ບ່ອນນັ່ງ | 80.000 |
| 4 | ລົດໂດຍສານຂະໜາດໃຫ່ຍ ຫຼາຍກວ່າ 26 ບ່ອນນັ່ງ | 150.000 |
| 5 | ລົດບັນທຸກ 6 ລໍ້ | 50.000 |
| 6 | ລົດບັນທຸກ 10-12 ລໍ້ | 80.000 |
| 7 | ລົດບັນທຸກ 18 ລໍ້/ລົດລາກ | 165.000 |

❖ ລົດເຂົ້າ-ອອກ ສປປ ລາວ ຈັດເກັບຕາມມາດຕາ 21 ຂໍ້ V, 5.2

| ລ/ດ | ປະເພດພາຫະນະ | ກີບ/ຄັ້ງ |
|---|---|---|
| 1 | ລົດເກງ, ຈີບ, ກະບະ | 25.000 |
| 2 | ລົດໂດຍສານຂະໜາດນ້ອຍ 7 ບ່ອນນັ່ງລົງມາ | 40.000 |
| 3 | ລົດໂດຍສານຂະໜາດກາງ 8-25 ບ່ອນນັ່ງ | 50.000 |
| 4 | ລົດໂດຍສານຂະໜາດໃຫຍ່ ຫຼາຍກວ່າ 26 ບ່ອນນັ່ງ | 80.000 |
| 5 | ລົດບັນທຸກ 6 ລໍ້ | 50.000 |
| 6 | ລົດບັນທຸກ 10-12 ລໍ້ | 80.000 |
| 7 | ລົດບັນທຸກ 18 ລໍ້/ລົດລາກ | 120.000 |

2. ມອບໃຫ້ກອງກຸ້ມຄອງພາສີ I-VII ຊີ້ນຳດ່ານພາສີຊາຍແດນທີ່ຂຶ້ນກັບ ເອົາໃຈໃສ່ຈັດເກັບ ແລະ ມອບລາຍຮັບຈາກຄ່າທຳນຽມດັ່ງກ່າວເຂົ້າບັນຊີງົບປະມານແຫ່ງຊາດເປັນແຕ່ລະມື້ ໂດຍຜ່ານຄັງເງິນປະຈຳດ່ານ ແລະ ສະຫຼຸບລາຍງານກ່ຽວກັບການຈັດຕັ້ງປະຕິບັດເປັນແຕ່ລະເດືອນ, ງວດ ແລະ ປີ ແລ້ວສົ່ງໃຫ້ກົມພາສີ ບໍ່ໃຫ້ກາຍວັນທີ 15 ຂອງທຸກໆເດືອນ.
3. ມອບໃຫ້ພະແນກຈັດຕັ້ງ, ບໍລິຫານ ແລະ ການເງິນ ສົມທົບກັບ ກອງກຸ້ມຄອງພາສີ I-VII ເພື່ອເຜີຍແຜ່ ແຈ້ງການແນະນຳສະບັບນີ້ໃຫ້ສັງຄົມຮັບຊາບ ແລະ ແຈກຢາຍປີ້ຄ່າທຳນຽມຕ່າງໆໃຫ້ບັນດາດ່ານພາສີຊາຍ ແດນໃນຂອບເຂດທົ່ວປະເທດເພື່ອຈັດຕັ້ງປະຕິບັດ.
4. ການຈັດເກັບຄ່າທຳນຽມລົດຜ່ານແດນ ແລະ ລົດເຂົ້າ-ອອກ ສປປ ລາວ ອັດຕາໃໝ່ ຕາມ ມາດຕາ 21 ຂໍ້ V, 5.1 ແລະ 5.2 ຕາມລັດຖະບັນຍັດຂອງປະທານປະເທດ ເລກທີ 003/ປປທ, ລົງວັນທີ 26 ທັນວາ 2012 ໃຫ້ເລີ່ມຈັດຕັ້ງປະຕິບັດແຕ່ວັນທີ 01 ຕຸລາ 2018 ເປັນຕົ້ນໄປ.
5. ໃນການຈັດຕັ້ງປະຕິບັດຕົວຈິງ ຫາກພົບຂໍ້ຫຍຸ້ງຍາກໃຫ້ລາຍງານກົມພາສີ ເພື່ອຊອກຫາວິທີແກ້ໄຂຕາມກົດໝາຍ ແລະ ລະບຽບການ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ຮັກສາການຫົວໜ້າກົມພາສີ

ບຸນປະເສີດ ສີກຸນລະບຸດ